ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສຳນັກງານນາຍົກລັດຖະມົນຕີ

ເລກທີ 123 / ນຍ

*ນະຄອນຫຼວງວຽງຈັນ, ວັນທີ 1.09.2004*

# ດຳລັດ
## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງຍຸຕິທຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ. ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການ ກະຊວງຍຸຕິທຳ ສະບັບເລກທີ 83/ ກຍ, ລົງວັນທີ 23 ກໍລະກົດ 2004.

## ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງຍຸຕິທຳ ແມ່ນອົງການຈັດຕັ້ງຄຸ້ມຄອງລັດ ຂັ້ນສູນກາງໃນກົງຈັກລັດຖະບານ ມີພາລະບົດບາດໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານຄົ້ນຄ້ວາວິທະຍາສາດກົດໝາຍ, ສ້າງຮ່າງກົດໝາຍ ແລະ ລະບົບກົດໝາຍ, ຄຸ້ມຄອງ ແລະ ໂຄສະນາເຜີຍແຜ່ກົດໝາຍ, ຄຸ້ມຄອງລະບົບຍຸຕິທຳ, ກວດກາການຈັດຕັ້ງປະຕິບັດກົດໝາຍ, ຮັບປະກັນການປະຕິບັດສິດ ແລະ ພັນທະຂອງພົນລະເມືອງຕາມກົດໝາຍ, ປະກອບສ່ວນໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ກໍ່ສ້າງ ແລະ ຂະຫຍາຍລະບອບປະຊາທິປະໄຕປະຊາຊົນ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ສີວິໄລ ແລະ ຍຸຕິທຳ.

# ໝວດທີ II
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 2. ໜ້າທີ່**

ກະຊວງຍຸຕິທຳມີໜ້າທີ່ດັ່ງນີ້:

2.1 ຫັນແນວທາງຂອງພັກ, ແຜນນະໂຍບາຍຂອງລັດ ມາເປັນທິດທາງແຜນການ, ໂຄງການ, ກົດໝາຍ ແລະ ລະບຽບການຕ່າງໆ ໃນວຽກງານຍຸຕິທຳ;

2.2 ຄົ້ນຄວ້າແຜນຍຸດທະສາດໃນການສ້າງ, ປັບປຸງ ແລະ ຂະຫຍາຍລະບົບກົດໝາຍແຫ່ງ ສປປ. ລາວ ສະເໜີລັດຖະບານພິຈາລະນາ;

2.3 ຄົ້ນຄວ້າຮ່າງກົດໝາຍຍຸຕິທຳ, ກົດໝາຍອື່ນໆ, ສັນຍາ, ສົນທິສັນຍາ ແລະ ນິຕິກຳຕ່າງໆ ທີ່ລັດຖະບານມອບໝາຍໃຫ້; ໃຫ້ຄວາມເຫັນແກ່ບັນດາກະຊວງ, ອົງການ ແລະ ການຈັດຕັ້ງອື່ນໆ ກ່ຽວກັບການສ້າງກົດໝາຍ ແລະ ວິທີການສ້າງນິຕິກຳ; ເຂົ້າຮ່ວມປະກອບຄຳເຫັນໃນການສ້າງກົດໝາຍ ແລະ ນິຕິກຳຕ່າງໆ ທີ່ຂະແໜງການອື່ນສະເໜີມາ ແລະ ປະກອບສ່ວນສ້າງປຶດອະທິບາຍກົດໝາຍ;

2.4 ຈັດຕັ້ງໂຄສະນາ, ເຜີຍແຜ່ກົດໝາຍ, ປະກອບຄຳເຫັນໃຫ້ບັນດາກະຊວງ, ອົງການ ແລະ ການຈັດຕັ້ງອື່ນໆ ກ່ຽວກັບແຜນການ, ວິທີໂຄສະນາເຜີຍແຜ່ກົດໝາຍ ແກ່ພົນລະເມືອງ ໃຫ້ມີສະຕິເຄົາລົບ ແລະ ປະຕິບັດກົດໝາຍ;

2.5 ລວບລວມບັນດາກົດໝາຍ ແລະ ນິຕິກຳຕ່າງໆ ເພື່ອສ້າງປຶ້ມສັງລວມກົດໝາຍ, ສະເໜີສ້າງປະມວນກົດໝາຍ ແລະ ອອກຈົດໝາຍເຫດທາງລັດຖະການ;

2.6 ຄຸ້ມຄອງພະແນກຍຸຕິທຳຂັ້ນແຂວງ, ຫ້ອງການຍຸຕິທຳຂັ້ນເມືອງ, ສຳນັກງານທະບຽນສານ, ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຫ້ອງການປະຕິບັດຄຳຕັດສິນຂອງສານທ້ອງຖິ່ນ, ສະພາທະນາຍຄວາມ, ຫ້ອງການທີ່ປຶກສາກົດໝາຍ ແລະ ການຈັດຕັ້ງຍຸຕິທຳອື່ນໆ ທີ່ຂຶ້ນກັບກະຊວງຍຸຕິທຳ;

2.7 ຄົ້ນຄ້ວາ ແລະ ປະກອບຄຳເຫັນໃສ່ຄຳຮ້ອງ ກ່ຽວກັບບັນຫາສັນຊາດ ແລ້ວນຳສະເໜີຕໍ່ລັດຖະບານ ເພື່ອພິຈາລະນາ;

2.8 ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານການເມືອງແນວຄິດ, ຄຸນສົມບັດ, ຈັນຍາທຳ, ແບບແຜນວິທີເຮັດວຽກ ແລະ ວິຊາສະເພາະໃຫ້ແກ່ພະນັກງານຂະແໜງການຂອງຕົນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມສາມາດປະຕິບັດໜ້າທີ່ວຽກງານພ້ອມທັງບັນຈຸ, ສັບຊ້ອນ, ຄຸ້ມຄອງ, ນຳໃຊ້ ແລະ ກວດກາພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການຕົນ ແຕ່ສູນກາງລົງຮອດທ້ອງຖິ່ນ;

2.9 ສ້າງແຜນການ, ຄຸ້ມຄອງ ແລະ ນຳໃຊ້ງົບປະມານ ແລະ ຄຸ້ມຄອງຊັບສົມບັດຕ່າງໆ ໃນຂະແໜງການຂອງຕົນ;

2.10 ຮັບ, ພິຈາລະນາ ແລະ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ການຈັດຕັ້ງ ຫລື ບຸກຄົນພາຍໃນ ແລະ ຕ່າງປະເທດສະເໜີມາ, ຮັບ ແລະ ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ໃນບັນດາວຽກງານຍຸຕິທຳ;

2.11 ພົວພັນ, ຮ່ວມມື, ແລກປ່ຽນບົດຮຽນທາງດ້ານກົດໝາຍ ແລະ ວຽກງານຍຸຕິທຳກັບສາກົນ ແລະ ຕ່າງປະເທດ.

**ມາດຕາ 3. ຂອບເຂດສິດ**

ກະຊວງຍຸຕິທຳມີຂອບເຂດສິດດັ່ງນີ້:

3.1 ສ້າງຮ່າງກົດໝາຍ ແລະ ນິຕິກຳອື່ນໆ ໃນຂົງເຂດຍຸຕິທຳ ສະເໜີຕໍ່ລັດຖະບານພິຈາລະນາ;

3.2 ສະເໜີຕໍ່ລັດຖະບານ ເພື່ອພິຈາລະນາປັບປຸງ, ດັດແກ້ກົດໝາຍ ແລະ ນິຕິກຳອື່ນໆ ທີ່ເຫັນວ່າບໍ່ສອດຄ່ອງ;

3.3 ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ແນໃສ່ປະຕິບັດໜ້າທີ່ຂອງຕົນ;

3.4 ສະເໜີສ້າງຕັ້ງ ຫລື ຍຸບເລີກ ບັນດາການຈັດຕັ້ງຍຸຕິທຳ ແລະ ໜ່ວຍວິຊາການຕ່າງໆ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;

3.5 ແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ປະຕິບັດນະໂຍບາຍ ແລະ ວິໄນຕໍ່ພະນັກງານ ທີ່ຂຶ້ນກັບຕົນ;

3.6 ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກຍຸຕິທຳ ປະຈຳອົງການປົກຄອງຂັ້ນແຂວງ, ຫ້ອງການຍຸຕິທຳປະຈຳອົງການປົກຄອງຂັ້ນເມືອງ ແລະ ການຈັດຕັ້ງຍຸຕິທຳອື່ນໆ ທີ່ຂຶ້ນກັບກະຊວງ;

3.7 ພົວພັນ, ປະສານສົມທົບກັບບັນດາກະຊວງ, ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນໆ ໃນການປະຕິບັດໜ້າທີ່ຂອງຕົນ;

3.8 ງົດການປະຕິບັດ, ລົບລ້າງ ຫລື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຂອງອົງການຂັ້ນລຸ່ມທີ່ຂຶ້ນກັບຕົນ ແລະ ສະເໜີງົດ, ປ່ຽນແປງ ຫລື ຍົກເລີກນິຕິກຳຂອງຂະແໜງການອື່ນໆ ຫລື ຂອງອົງການປົກຄອງທ້ອງຖິ່ນ ທີ່ຂັດກັບລະບຽບຫລັກການ ຂອງຂະແໜງການຍຸຕິທຳ ຫລື ຂັດກັບລະບຽບກົດໝາຍ;

3.9 ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມຂອບເຂດສິດ ແລະ ຕາມ ໜ້າທີ່ຂອງຕົນ ແລະ ຕາມການມອບໝາຍຂອງລັດຖະບານ;

3.10 ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ລັດຖະບານມອບໝາຍໃຫ້ສະເພາະ ແລະ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ ຂອງກະຊວງຍຸຕິທຳ

**ມາດຕາ 4. ໂຄງປະກອບບຸກຄະລາກອນ**

**ກ. ຢູ່ຂັ້ນສູນກາງປະກອບມີບຸກຄະລາກອນດັ່ງນີ້:**

4.1 ກະຊວງຍຸຕິທຳ ປະກອບມີລັດຖະມົນຕີວ່າການ 01 ທ່ານ ເປັນຫົວໜ້າກະຊວງ, ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງຈາກປະທານປະເທດ ຕາມການສະເໜີຂອງນາຍົກລັດຖະມົນຕີ ແລະ ໂດຍການຮັບຮອງຈາກສະພາແຫ່ງຊາດ; ລັດຖະມົນຕີວ່າການ ຮັບຜິດຊອບຕໍ່ລັດຖະບານກ່ຽວກັບການປະຕິບັດໜ້າທີ່ການເມືອງຂອງກະຊວງ ຕາມ

ທີ່ໄດ້ກຳນົດໄວ້ໃນມາດຕາ 1 ແລະ 2 ຂອງ ດຳລັດສະບັບນີ້ ແລະ ຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບກົດໝາຍອື່ນໆ;

4.2 ກະຊວງຍຸຕິທຳ ມີລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ. ລັດຖະມົນຕີຊ່ວຍວ່າການ ເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການໃນການນຳພາ, ອຳນວຍຄວບຄຸມວຽກງານລວມ ຂອງກະຊວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງລັດຖະມົນຕີວ່າການ;

4.3 ໃນກໍລະນີຕິດຂັດ ຫລື ບໍ່ຢູ່ ລັດຖະມົນຕີວ່າການ ຕ້ອງມອບສິດປະຈຳການຊົ່ວຄາວ ຢ່າງເປັນລາຍລັກອັກສອນ ໃຫ້ລັດຖະມົນຕີຊ່ວຍວ່າການຜູ້ໃດໜຶ່ງວ່າການແທນ. ໃນເວລາລັດຖະມົນຕີວ່າການກັບຄືນມາ ຜູ້ປະຈຳການຕ້ອງລາຍງານວຽກທີ່ຕົນເອງໄດ້ແກ້ໄຂໃຫ້ລັດຖະມົນຕີວ່າການຊາບ;

4.4 ການນຳດ້ານວິຊາການຂອງກະຊວງຍຸຕິທຳ ປະກອບມີ ຫົວໜ້າຫ້ອງການ, ຫົວໜ້າກົມ ແລະ ຕຳແໜ່ງທຽບເທົ່າຕ່າງໆ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ; ມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ ແລະ ຕຳແໜ່ງທຽບເທົ່າຊຶ່ງຖືກແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ໂດຍລັດຖະມົນຕີວ່າການ ຕາມການສະເໜີຂອງຫົວໜ້າກົມຈັດຕັ້ງ ແລະ ພະນັກງານ;

4.5 ກະຊວງຍຸຕິທຳ ປະກອບດ້ວຍພະນັກງານວິຊາການ ແລະ ພະນັກງານບໍລິຫານຮັບໃຊ້ທົ່ວໄປຈຳນວນໜຶ່ງ ເພື່ອປະກອບເຂົ້າຕຳແໜ່ງງານຕ່າງໆ ຕາມຄວາມເໝາະສົມ.

**ຂ. ຢູ່ຂັ້ນທ້ອງຖິ່ນປະກອບມີບຸກຄະລາກອນດັ່ງນີ້:**

- ພະແນກຍຸຕິທຳ ປະຈຳອົງການປົກຄອງຂັ້ນແຂວງປະກອບມີ ຫົວໜ້າ, ຮອງຫົວໜ້າພະແນກ ແລະ ພະນັກງານບໍລິຫານ, ວິຊາການຈຳນວນໜຶ່ງ ສັງກັດໃນພະແນກຕາມຄວາມເໝາະສົມ.
- ຫ້ອງການຍຸຕິທຳ ປະຈຳອົງການປົກຄອງຂັ້ນເມືອງ ປະກອບມີ ຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ພະນັກງານບໍລິຫານ, ວິຊາການຈຳນວນໜຶ່ງ ສັງກັດໃນຫ້ອງການຕາມຄວາມເໝາະສົມ.
- ສາຂາສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ສາຂາສຳນັກງານທະບຽນສານປະຈຳອົງການປົກຄອງຂັ້ນແຂວງ ປະກອບມີ ຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ພະນັກງານບໍລິຫານ, ວິຊາການຈຳນວນໜຶ່ງສັງກັດ ຕາມຄວາມເໝາະສົມ.

ການແຕ່ງຕັ້ງ, ເລື່ອນຊັ້ນ, ເລື່ອນຂັ້ນ, ປົດຕຳແໜ່ງ, ປະຕິບັດການຍ້ອງຍໍ, ປະຕິບັດວິໄນ ແລະ ອື່ນໆ ຕໍ່ບຸກຄະລາກອນຂະແໜງຍຸຕິທຳຢູ່ທ້ອງຖິ່ນ ແມ່ນປະຕິບັດຕາມລະບຽບກົດໝາຍກຳນົດ.

**ມາດຕາ 5. ໂຄງປະກອບກົງຈັກການຈັດຕັ້ງ**

**ກ. ກົງຈັກບໍລິຫານ, ວິຊາການ ຂັ້ນກົມ ແລະ ທຽບເທົ່າ ຢູ່ຂັ້ນສູນກາງປະກອບດ້ວຍ:**

1. ຫ້ອງການ;
2. ກົມຈັດຕັ້ງ ແລະ ພະນັກງານ;
3. ກົມກົດໝາຍ;
4. ກົມໂຄສະນາເຜີຍແຜ່ກົດໝາຍ;
5. ກົມຄຸ້ມຄອງລະບົບຍຸຕິທຳ;
6. ກົມທະບຽນສານ;
7. ກົມປະຕິບັດຄຳຕັດສິນຂອງສານ;
8. ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
9. ສະຖາບັນຝຶກອົບຮົມກົດໝາຍ ແລະ ວຽກງານຍຸຕິທຳ;
10. ສະຖາບັນຄົ້ນຄວ້າກົດໝາຍ ແລະ ຮ່ວມມືກັບຕ່າງປະເທດ.

**ຂ. ກົງຈັກການຈັດຕັ້ງຍຸຕິທຳຢູ່ຂັ້ນທ້ອງຖິ່ນມີດັ່ງນີ້:**

1. ພະແນກຍຸຕິທຳປະຈຳແຂວງ, ນະຄອນ ແລະ ເຂດພິເສດ;
2. ຫ້ອງການຍຸຕິທຳ ປະຈຳເມືອງ ແລະ ເທດສະບານ;
3. ສາຂາ ສຳນັກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ສາຂາສຳນັກງານທະບຽນສານ.

**ຄ. ການຈັດຕັ້ງອາຊີບກົດໝາຍມີດັ່ງນີ້:**

1. ສະພາທະນາຍຄວາມ;
2. ຫ້ອງການທີ່ປຶກສາກົດໝາຍ.

**ມາດຕາ 6. ການກຳນົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງໂຄງປະກອບກົງຈັກ:**

ມອບໃຫ້ລັດຖະມົນຕີວ່າການ ກະຊວງຍຸຕິທຳ ອອກຂໍ້ຕົກລົງກຳນົດລະອຽດ ກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຫ້ອງການ, ບັນດາກົມ ແລະ ການຈັດຕັ້ງອື່ນໆ ທີ່ກຳນົດໄວ້ໃນມາດຕາ 5 ຂ້າງເທິງນີ້ ເພື່ອຈັດຕັ້ງປະຕິບັດວຽກງານ ໃຫ້ໄດ້ຮັບຜົນດີ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ຫລັກການ ແລະ ວິທີເຮັດວຽກ**

ກະຊວງຍຸຕິທຳ ເຄື່ອນໄຫວວຽກງານ ຕາມຫລັກການ ແລະ ວິທີການດັ່ງນີ້:

7.1 ເຮັດວຽກຕາມຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ຕາມລະບົບແບ່ງຂັ້ນຄຸ້ມຄອງ ແລະ ປະຕິບັດລະບອບຫົວໜ້າດຽວ;

7.2 ເຮັດວຽກຢ່າງມີແຜນການ, ມີຈຸດສຸມ, ມີຈຸດທົດລອງ, ມີການປະສານສົມທົບຢູ່ພາຍໃນ, ກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ. ມີການຕິດຕາມກວດກາ, ສະຫລຸບ, ປະເມີນຜົນ ແລະ ຖອດຖອນບົດຮຽນຢ່າງເປັນປົກກະຕິ;

7.3 ເຮັດວຽກຕາມທິດນຳ ທັງເຮັດ ທັງຮຽນ ທັງກໍ່ສ້າງບຳລຸງພະນັກງານ, ສ້າງເງື່ອນໄຂໃຫ້ທຸກຄົນມີໂອກາດນຳໃຊ້ຄວາມຮູ້ຄວາມສາມາດ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ, ປະຕິບັດນິຕິທຳ ແລະ ຈັນຍາທຳ, ຍົກສູງຄວາມຮັບຜິດຊອບຂອງແຕ່ລະຄົນ ຕໍ່ໜ້າທີ່ວຽກງານ;

7.4 ປະຕິບັດມາດຕະການ ທັນລົງຮາກຖານ ແລະ ຈັດຕັ້ງປະຕິບັດຕົວຈິງ ໃຫ້ເກີດດອກອອກຜົນ;

7.5 ປະຕິບັດ ລະບອບສ່ອງແສງ ແລະ ລາຍງານຕໍ່ລັດຖະບານຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

ກະຊວງຍຸຕິທຳມີງົບປະມານ ແລະ ກາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 9. ການຈັດຕັ້ງປະຕິບັດ.**

ກະຊວງຍຸຕິທຳ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງ ທ້ອງຖິ່ນຂັ້ນຕ່າງໆ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້.

**ມາດຕາ 10. ຜົນສັກສິດ.**

ດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດສະບັບເລກທີ 110/ນຍ, ລົງວັນທີ 31/07/2000.

ນິຕິກຳໃດປະກາດໃຊ້ໃນເມື່ອກ່ອນ ທີ່ຍັງມີຜົນສັກສິດ ບັງຄັບໃຊ້, ຖ້າມີເນື້ອໃນຂັດກັບດຳລັດສະບັບນີ້ ແມ່ນໃຫ້ຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ**

ບຸນຍັງ ວໍລະຈິດ